Save the Children

World Mosquito Program

# ສະບາຍດີ ໂວບັກເຄຍ

ໂຄງການຄວບຄຸມໄຂ້ຍຸງລາຍ ໂດຍນຳໃຊ້ວິທີການ **ໂວບັກເຄຍ** ຢູ່ນະຄອນຫຼວງວຽງຈັນ, ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການຄວບຄຸມປະຊາກອນຍຸງໂລກ (WMP) ຮ່ວມມືກັບກະຊວງສາທາລະນະສຸກ ແລະອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ

## 1 ໂວບັກເຄຍແມ່ນຫຍັງ?

- ແມ່ນ ເຊື້ອຈຸລິນຊີດີ ຊະນິດໜຶ່ງ ທີ່ມີຢູ່ນຳທຳມະຊາດ.
- 50-60% ຂອງແມງໄມ້ຊະນິດຕ່າງໆທົ່ວໂລກແມ່ນມີ ໂວບັກເຄຍ ຢູ່ໃນໂຕ, ລວມທັງ ຍຸງບາງຊະນິດ.
- ເຊື້ອຈຸລິນຊີດີນີ້ສາມາດຢັບຢັ້ງການແຜ່ເຊື້ອໄວຣັສໄຂ້ຍຸງລາຍ ຈາກຄົນທີ່ຕິດເຊື້ອໄປສູ່ຄົນອື່ນ.
- ນັກວິທະຍາສາດໄດ້ເອົາຈຸລິນຊີ ໂວບັກເຄຍ ໃສ່ໃນຍຸງລາຍບ້ານເພື່ອຫຼຸດຜ່ອນຄວາມສາມາດຂອງມັນໃນການສົ່ງຕໍ່ເຊື້ອໄວຣັສໄຂ້ຍຸງລາຍ.

## 2 ໂວບັກເຄຍ ເຮັດວຽກແນວໃດ?

ຍຸງລາຍບ້ານທີ່ມີ **ໂວບັກເຄຍ** ແມ່ນມີພູມຄຸ້ມກັນທີ່ສາມາດທຳລາຍເຊື້ອໄວຣັສໄຂ້ຍຸງລາຍ ພາຍໃນໂຕມັນເອງ. ສະນັ້ນ ເວລາຍຸງລາຍບ້ານທີ່ມີ ໂວບັກເຄຍ ໄປກັດຜູ້ປ່ວຍໄຂ້ຍຸງລາຍ ມັນຈະບໍ່ສົ່ງຕໍ່ເຊື້ອພະຍາດດັ່ງກ່າວໄປຫາຜູ້ອື່ນ ເນື່ອງຈາກວ່າໂວບັກເຄຍ ໃນໂຕຍຸງໄດ້ທຳລາຍເຊື້ອໄວຣັສດັ່ງກ່າວພາຍໃນໂຕມັນເອງແລ້ວ.

ວິທີການ **ໂວບັກເຄຍ** ເປັນວິທີການຢັບຢັ້ງ ແລະ ຫຼຸດຜ່ອນການສົ່ງເຊື້ອໄຂ້ຍຸງລາຍ ທີ່ບໍ່ສາມາດເຫັນຜົນໃນໄລຍະເວລາອັນສັ້ນໆ. ໝາຍຄວາມວ່າຕ້ອງໄດ້ໃຊ້ເວລາ. ວິທີການດັ່ງກ່າວນີ້ແມ່ນມີຄວາມຍືນຍົງ ແລະໄດ້ຮັບຜົນໃນໄລຍະຍາວ ໂດຍສະເພາະແມ່ນຢູ່ໃນຂົງເຂດພື້ນທີ່ປະຕິບັດໂຄງການ. ສ່ວນວ່າອັດຕາການແຜ່ລະບາດຂອງໄຂ້ຍຸງລາຍ ຈະຫຼຸດລົງຫຼາຍໜ້ອຍສ່ຳໃດນັ້ນແມ່ນຂຶ້ນກັບຫຼາຍປັດໃຈເຊັ່ນວ່າ: ສະພາບແວດລ້ອມ ແລະ ການແຜ່ຂະຫຍາຍພັນຂອງປະຊາກອນຍຸງລາຍທີ່ມີ ໂວບັກເຄຍ.

## 3 ຍຸງລາຍບ້ານທີ່ມີ ໂວບັກເຄຍ ປອດໄພບໍ່?

ຍຸງລາຍບ້ານທີ່ມີ ໂວບັກເຄຍ ບໍ່ເປັນອັນຕະລາຍຕໍ່ຄົນ, ສັດ ແລະ ສິ່ງແວດລ້ອມ. ນອກຈາກບໍ່ເປັນອັນຕະລາຍແລ້ວ, ຄວາມສ່ຽງໃນການຕິດພະຍາດໄຂ້ຍຸງລາຍຂອງທ່ານ ແລະ ລູກຫຼານຂອງທ່ານກໍ່ຈະຫຼຸດລົງເຊັ່ນກັນ.

## 4 ພວກເຮົາຍັງສາມາດສືບຕໍ່ປະຕິບັດ 5 ປ ໃນພື້ນທີ່ໂຄງການປ່ອຍຍຸງໄດ້ບໍ່?

ທ່ານຍັງສາມາດຂ້າຍຸງ ແລະ ສືບຕໍ່ປະຕິບັດ **5 ປ** ຢູ່ບ້ານ ແລະ ໃນຂົງເຂດຊຸມຊົນຂອງທ່ານໄດ້ຕາມປົກກະຕິ **ພຽງແຕ່ຂໍຄວາມຮ່ວມມືຫ້າມທຳລາຍ ຫຼື ຂວ້ຳຈອກປ່ອຍຍຸງຂອງໂຄງການ.**




ຕິດຕໍ່ພວກເຮົາ: wmplaos

+856 20 9822 6266

**ສະບາຍດີ ໂວບັກເຄຍ**

Save the Children

World Mosquito Program

ໂຄງການຄວບຄຸມໄຂ້ຍຸງລາຍ ໂດຍນຳໃຊ້ວິທີການ **ໂວບັກເຄຍ** ຢູ່ນະຄອນຫຼວງວຽງຈັນ, ສປປ ລາວ ໂດຍໄດ້ຮັບການສະໜັບສະໜູນຈາກ ໂຄງການຄວບຄຸມປະຊາກອນຍຸງໂລກ (WMP) ຮ່ວມມືກັບ ກະຊວງ ສາທາລະນະສຸກ ແລະ ອົງການຊ່ວຍເຫຼືອເດັກສາກົນ ປະຈຳ ສປປ ລາວ

## 5 ດ້ວຍເຫດຜົນໃດໂຄງການຈຶ່ງເລືອກປະຕິບັດໂຄງການຢູ່ເມືອງ ຈັນທະບູລີ ແລະ ໄຊເສດຖາ ກ່ອນເມືອງອື່ນໆ?

ເນື່ອງຈາກວ່າ 2 ເມືອງນີ້ ແມ່ນໄດ້ມີການເກັບກຳຂໍ້ມູນດ້ານປະຊາກອນຍຸງ ມາກ່ອນແລ້ວໃນໄລຍະປີ 2019 - 2020 ແລະ ຜົນສຳຫຼວດພົບວ່າ 2 ເມືອງດັ່ງກ່າວນີ້ **ຍຸງລາຍບ້ານ** ເຖິງ **91,6%** ແລະ **ຍຸງລາຍປ່າ** ພຽງແຕ່ **8,4%** ເທົ່ານັ້ນ. ດ້ວຍເຫດຜົນດັ່ງກ່າວຈຶ່ງມີການປະຕິບັດໂຄງການຄວບຄຸມໄຂ້ຍຸງລາຍ ໂດຍນຳໃຊ້ວິທີການ ໂວບັກເຄຍ ຢູ່ໃນ 2 ເມືອງນີ້ກ່ອນ ແລະ ຖ້າຫາກວ່າການປະຕິບັດໂຄງການໄດ້ຮັບໝາກຜົນດີ ແລະ ມີຄວາມເພິ່ງພໍໃຈ ກໍ່ອາດຈະມີແຜນສືບຕໍ່ຂະຫຍາຍໂຄງການໄປຕ່າງເມືອງ ຫຼື ຕ່າງແຂວງຕື່ມອີກໃນຕໍ່ໜ້າ.

## 6 ການປ່ອຍຍຸງລາຍທີ່ມີໂວບັກເຄຍແມ່ນຈະໃຊ້ໄລຍະເວລາທັງໝົດເທົ່າໃດ ແລະ ຈະເຫັນຜົນເມື່ອໃດ?

- ການປ່ອຍຍຸງຈະໃຊ້ເວລາທັງໝົດ 20 ອາທິດ ເຊິ່ງເລີ່ມແຕ່ທ້າຍເດືອນ ເມສາ ຫາ ຕົ້ນເດືອນ ກັນຍາ ປີ 2023. ໂດຍແມ່ນ ອສບ ຂອງແຕ່ລະບ້ານ ຈະເປັນຜູ້ລົງໄປຢາຍຈອກປ່ອຍຍຸງ ແລະ ຕິດຕາມທຸກໆອາທິດ.
- ຜົນສຳເລັດຂອງວິທີການນີ້ ແມ່ນຈະອີງໃສ່ຜົນການຕິດຕາມກວດກາ ແລະ ລາຍງານກ່ຽວກັບອັດຕາການເກີດ ຫຼື ຈຳນວນກໍລະນີເຈັບປ່ວຍຍ້ອນພະຍາດໄຂ້ຍຸງລາຍ ໂດຍສົມທຽບກ່ອນ ແລະ ຫຼັງປະຕິບັດໂຄງການ.

## 7 ພາຍຫຼັງປ່ອຍຍຸງແລ້ວພວກເຮົາຈະຮູ້ ແລະ ຈຳແນກໄດ້ຄືແນວໃດວ່າຍຸງລາຍໂຕໃດມີ ຫຼື ບໍ່ມີ ໂວບັກເຄຍ?

ເຮົາບໍ່ສາມາດຈຳແນກ ຫຼື ຮູ້ໄດ້ໂດຍການສັງເກດເບິ່ງດ້ວຍຕາເປົ່າວ່າຍຸງລາຍໂຕໃດແມ່ນຍຸງທີ່ມີໂວບັກເຄຍ. ສະນັ້ນ, ທ່ານບໍ່ຕ້ອງກັງວົນວ່າທ່ານໄດ້ຂ້າຍຸງລາຍທີ່ມີ ໂວບັກເຄຍ ຫຼື ບໍ່. ພວກເຮົາແນະນຳໃຫ້ທ່ານປະຕິບັດມາດຕະການຄວບຄຸມ ແລະ ວິທີປ້ອງກັນທຸກຮູບແບບເພື່ອປ້ອງກັນບໍ່ໃຫ້ຍຸງກັດ. ***ທ່ານສາມາດຕີ ຫຼື ຂ້າຍຸງທີ່ມາກັດທ່ານໄດ້ຕາມປົກກະຕິ.***

**ຕິດຕໍ່ພວກເຮົາ:** wmplaos
+856 20 9822 6266
vientiane@wmprojects.org
worldmosquitoprogram.org/laos